ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ 0428----

ກົມທະບຽນວິສາຫະກິດ ເລກທີ /ກທວ

ນະຄອນຫລວງວຽງຈັນ, ວັນທີ 24 ຕຸລາ 2024

# ແຈ້ງການ

**ເຖິງ:** - ວິສາຫະກິດ ໃນຂອບເຂດທົ່ວປະເທດ.

- ເຈົ້າໜ້າທີ່ທະບຽນວິສາຫະກິດ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ໃຫ້ວິສາຫະກິດ ປ່ຽນແປງເນື້ອໃນທະບຽນວິສາຫະກິດ ແລະ ຍຸບເລີກວິສາຫະກິດ.

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກົມທະບຽນວິສາຫະກິດ ສະບັບເລກທີ 2078/ອຄ, ລົງວັນທີ 15 ພະຈິກ 2023;
- ອີງຕາມ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດວຽກງານທະບຽນວິສາຫະກິດ ສະບັບເລກທີ 2406/ອຄ, ລົງວັນທີ 22 ທັນວາ 2023.

ເພື່ອເຮັດໃຫ້ຂໍ້ມູນວິສາຫະກິດ ໃນລະບົບທະບຽນວິສາຫະກິດ ມີຄວາມຄົບຖ້ວນສົມບູນ ສອດຄ່ອງກັບການເຄື່ອນໄຫວຕົວຈິງຂອງວິສາຫະກິດ ແລະ ຮັດແຄບຕົວເລກວິສາຫະກິດທີ່ຊຳລະພັນທະອາກອນ ແລະ ວິສາຫະກິດທີ່ຂຶ້ນທະບຽນວິສາຫະກິດ ພ້ອມທັງເປັນການກະກຽມການນຳໃຊ້ຕົວເລກລະຫັດດຽວຂອງເລກປະຈຳຕົວຜູ້ເສຍອາກອນ ແລະ ເລກລະຫັດວິສາຫະກິດ ໂດຍຈະອີງໃສ່ເລກປະຈຳຕົວຜູ້ເສຍອາກອນເປັນຫຼັກ ແນໃສ່ການສະໜອງຂໍ້ມູນກ່ຽວກັບວິສາຫະກິດທີ່ຊັດເຈນ ໃຫ້ພາກລັດ ແລະ ເອກະຊົນ ແລະ ເຊື່ອມສານຖານຂໍ້ມູນວິສາຫະກິດແຫ່ງຊາດ ກັບ ຂະແໜງການກ່ຽວຂ້ອງ. ສະນັ້ນ, ກົມທະບຽນວິສາຫະກິດ ແຈ້ງມາ ເພື່ອຊາບ ແລະ ປະຕິບັດ ດັ່ງນີ້:

1. ໃຫ້ວິສາຫະກິດທີ່ຂຶ້ນທະບຽນວິສາຫະກິດ ກ່ອນວັນທີ 29/04/2024 ທີ່ຍັງບໍ່ມີເລກປະຈຳຕົວຜູ້ເສຍອາກອນ ຫຼື ມີເລກປະຈຳຕົວຜູ້ເສຍອາກອນແລ້ວທີ່ດຳເນີນທຸລະກິດ ແຕ່ຍັງບໍ່ໄດ້ລະບຸໃນໃບທະບຽນວິສາຫະກິດ ແມ່ນສະເໜີປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດສະບັບປັບປຸງ ແລະ ລະບຽບການທີ່ກ່ຽວຂ້ອງ.

2. ສຳລັບ ວິສາຫະກິດ ທີ່ບໍ່ມີຕົວເລກປະຈຳຕົວຜູ້ເສຍອາກອນ ແຕ່ຍັງດຳເນີນທຸລະກິດຢູ່ ແມ່ນໃຫ້ພົວພັນກັບເຈົ້າໜ້າທີ່ສ່ວຍສາອາກອນ ເພື່ອຂໍເລກປະຈຳຕົວຜູ້ເສຍອາກອນ ແລ້ວຈຶ່ງສະເໜີປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ລະບຸເລກປະຈຳຕົວຜູ້ເສຍອາກອນດັ່ງກ່າວໄວ້ໃນໃບທະບຽນວິສາຫະກິດ. ຖ້າຫາກ ຢຸດເຊົາການເຄື່ອນໄຫວທຸລະກິດແລ້ວແມ່ນ ໃຫ້ສະເໜີຍຸບເລີກວິສາຫະກິດ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ລະບຽບການທີ່ກ່ຽວຂ້ອງ.

3. ການສະເໜີປັບປຸງຂໍ້ມູນຕາມຂໍ້ 1 ແລະ 2 ເທິງນີ້ ແມ່ນໃຫ້ຍື່ນຄຳຮ້ອງ ແລະ ເອກະສານປະກອບ ຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ ບ່ອນທີ່ອອກໃບທະບຽນວິສາຫະກິດ ຊຶ່ງເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ຈະດຳເນີນຕາມ

ຂັ້ນຕອນ ແລະ ກຳນົດເວລາ ທີ່ໄດ້ກຳນົດໄວ້ໃນຄຳແນະນຳ ສະບັບເລກທີ 2406/ອຄ, ລົງວັນທີ 22 ທັນວາ 2023. ສຳລັບແບບພິມຄຳຮ້ອງ ແມ່ນສາມາດດາວໂຫຼດໃນເວັບໄຊ້ຖານຂໍ້ມູນວິສາຫະກິດແຫ່ງຊາດ (www.ned.moic.gov.la).

4. ວິສາຫະກິດ, ເຈົ້າໜ້າທີ່ທະບຽນວິສາຫະກິດ **ໃຫ້ຈັດຕັ້ງປະຕິບັດ ແຈ້ງການສະບັບນີ້ໃຫ້ເຂັ້ມງວດ ແລະ ໃຫ້ສຳເລັດພາຍໃນ ເດືອນ ມີນາ ປີ 2025**. ພາຍຫຼັງໝົດກຳນົດເວລາດັ່ງກ່າວແລ້ວ, ວິສາຫະກິດທີ່ບໍ່ດຳເນີນການຕາມແຈ້ງການສະບັບນີ້ ແມ່ນຈະຖືກມາດຕະການໂຈະການນຳໃຊ້ໃບທະບຽນວິສາຫະກິດ ແລະ ຈະຖືກຍ້າຍຂໍ້ມູນໄປຢູ່ໃນຖານຂໍ້ມູນທີ່ບໍ່ເຄື່ອນໄຫວທຸລະກິດ ລວມທັງມາດຕະການອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ປະຕິບັດດ້ວຍ.

**ຫົວໜ້າກົມ**

(ວິສາຫະກິດ ຍັງບໍ່ມີເລກປະຈຳຕົວຜູ້ເສຍອາກອນໃນລະບົບທະບຽນວິສາຫະກິດ)

**ອະພິສິດ ແສງສຸລິວົງ**

**ຕິດຕໍ່ພົວພັນ:**

- ທ່ານ ອຸດອນ ພຸດທະບັນດິດ, 020 55616270
- ທ່ານ ບຸນສີ ອິນຕາວັນ, 020 29984579
- ທ່ານ ກິນນະພາ ພຽນວົງ, 020 92624745